**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**

ບົດສະຫຼຸບການເຄື່ອນໄຫວທຸລະກິດ ປະຈໍາປີ 2015

www.bcel.com.la

## 1. ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ດຳເນີນທຸລະກິດໃນຮູບແບບມະຫາຊົນ ແລະຈົດທະບຽນຢູ່ໃນຕະຫຼາດຫຼັກຊັບ ສປປ ລາວ.

ທະນາຄານການຄ້າຕ່າງປະເທດລາວ ເຊິ່ງໄດ້ຮັບການສ້າງຕັ້ງຂຶ້ນພາຍໃຕ້ໃບອະນຸຍາດສ້າງຕັ້ງທະນາຄານ ເລກທີ 129/ທຫລ, ລົງວັນທີ 01 ພະຈິກ 1989 ອອກໂດຍທະນາຄານແຫ່ງ ສປປ ລາວ ແລະ ໃບອະນຸຍາດດຳເນີນທຸລະກິດດ້ານການທະນາຄານ ສະບັບປັບປຸງຄັ້ງລ່າສຸດ ເລກທີ 4284/ທຫລ, ລົງວັນທີ 11 ພະຈິກ 2010 ອອກໂດຍທະນາຄານແຫ່ງ ສປປ ລາວ. ໃນວັນທີ 23 ທັນວາ 2010 ທະນາຄານໄດ້ສຳເລັດການຂາຍຮຸ້ນອອກສູ່ມະຫາຊົນ. ທະນາຄານໄດ້ປ່ຽນຊື່ມາເປັນ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ອີງຕາມໃບທະບຽນວິສາຫະກິດ ເລກທີ 0061/ທຈທ, ລົງວັນທີ 10 ມັງກອນ 2011 ອອກໂດຍກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ຂອງ ສປປ ລາວ. ພ້ອມດຽວກັນນັ້ນ, ກະຊວງການເງິນໄດ້ຕາງໜ້າໃຫ້ລັດຖະບານເປັນຜູ້ຖືຮຸ້ນໃຫຍ່ສຸດໂດຍຖືຮຸ້ນ 80% ຂອງຮຸ້ນທັງໝົດ.

ວັນທີ 15 ກໍລະກົດ 2011, ກະຊວງການເງິນ ຂາຍຮຸ້ນສາມັນ 10% ໃຫ້ຄູ່ຮ່ວມຮຸ້ນທາງຍຸດທະສາດ ຊື່ວ່າ ທະນາຄານ COFIBRED ອີງຕາມສັນຍາການຊື້ຮຸ້ນສາມັນ ລະຫວ່າງ ກະຊວງການເງິນ ແລະ ທະນາຄານ COFIBRED.

ປະຈຸບັນ ໂຄງສ້າງການຖືຮຸ້ນຂອງທະນາຄານ: ລັດຖະບານຖືຮຸ້ນ 70% ຂອງທຶນທີ່ປະກອບແລ້ວ, ຮຸ້ນຂອງນັກລົງທຶນພາຍໃນ (ລວມທັງພະນັກງານ ທຄຕລ) ແມ່ນ 10% ຂອງທຶນທີ່ໄດ້ປະກອບແລ້ວ, ຄູ່ຮ່ວມຮຸ້ນທາງຍຸດທະສາດຖື 10% ຂອງທຶນທັງໝົດທີ່ໄດ້ປະກອບແລ້ວ ແລະ ຜູ້ຖືຮຸ້ນຈາກຕ່າງປະເທດ 10%.

ກິດຈະກຳຫລັກຂອງທະນາຄານ ແມ່ນເພື່ອສະໜອງການບໍລິການ ລວມທັງການລະດົມທຶນ ແລະ ຮັບຝາກເງິນໄລຍະສັ້ນ, ກາງ ແລະ ຍາວຈາກອົງກອນ ແລະ ບຸກຄົນ; ເງິນກູ້ໄລຍະສັ້ນ, ກາງ, ຍາວ ໃຫ້ແກ່ຫົວໜ່ວຍທຸລະກິດ ແລະ ບຸກຄົນ ຕາມຈຸດປະສົງ ແລະ ຄວາມສາມາດໃນການສະໜອງທຶນຂອງທະນາຄານ; ບໍລິການແລກປ່ຽນເງິນຕາຕ່າງປະເທດ, ການບໍລິການການຄ້າລະຫວ່າງປະເທດ, ບໍລິການໜັງສືສິນເຊື່ອ, ຄ້ຳປະກັນ, ໃຫ້ບໍລິການຊື້ຂາຍວັດຖຸມີຄ່າອື່ນໆ ແລະ ໃຫ້ບໍລິ ການດ້ານທະນາຄານອື່ນໆ ທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ.

**ທຶນຈົດທະບຽນ**

ທຶນຈົດທະບຽນ ນະວັນທີ 31 ທັນວາ 2015 ແມ່ນ 682,888 ລ້ານກີບ.

**ທີ່ຕັ້ງ ແລະ ເຄືອຂ່າຍ**

ສຳນັກງານໃຫຍ່ຂອງທະນາຄານຕັ້ງຢູ່ເລກທີ 01, ຖະໜົນປາງຄຳ, ບ້ານຊຽງຍືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ. ໃນວັນທີ 30 ມິຖຸນາ 2015 ທະນາຄານມີໜຶ່ງ (1) ສຳນັກງານໃຫຍ່, ໜຶ່ງ (1) ບໍລິສັດໃນເຄືອ, ສີ່ (4) ບໍລິສັດຮ່ວມທຶນ, ສິບເກົ້າ (19) ສາຂາຫລັກ, ເຈັດສິບເຈັດ (77) ໜ່ວຍບໍລິການ ແລະ ສິບຫ້າ (15) ຫ້ອງແລກປ່ຽນເງິນຕາທົ່ວ ສປປ ລາວ.

## 2. ວິໃສທັດ

ທຄຕລ ໄດ້ກຳນົດວິໃສທັດ ເພື່ອປະກອບເຂົ້າໃນການພັດທະນາວຽກງານຂອງຕົນໃຫ້ບັນລຸຕາມເປົ້າໝາຍ ແລະ ວັດຖຸປະສົງຄື: "ເປັນທະນາຄານທີ່ນຳໜ້າ ທັນຍຸກທັນສະໄໝ ໄດ້ມາດຕະຖານສາກົນ" ທຄຕລ ໄດ້ມຸ່ງເນັ້ນພັດທະນາຕົນເອງທຸກດ້ານ ໃຫ້ເປັນທະນາຄານທັນສະໄໝ ບໍລິການລູກຄ້າດ້ວຍຄວາມສະດວກສະບາຍໄດ້ມາດຕະຖານສາກົນ ເປັນທີ່ຍອມ ຮັບຂອງລູກຄ້າ ແລະ ສະຖາບັນການເງິນທັງພາຍໃນແລະຕ່າງປະເທດ ຮັກສາຄວາມເປັນທະນາຄານທຸລະກິດນຳໜ້າ ຢູ່ ສປປ ລາວ ແລະ ກ້າວໄປສູ່ລະດັບພູມິພາກ ແລະ ລະດັບສາກົນເທື່ອລະກ້າວ.

## 3. ພາລະກິດ

- ປັບປຸງໂຄງຮ່າງການຈັດຕັ້ງ ແລະ ລະບຽບການຕ່າງໆພາຍໃນທີ່ມີຢູ່ແລ້ວ ພ້ອມທັງສ້າງລະບຽບເພີ່ມເຕີມຈຳນວນໜຶ່ງ ເພື່ອໃຫ້ສອດຄ່ອງກັບກົດໝາຍຂອງ ສປປ ລາວ ແລະ ສອດຄ່ອງກັບລະບຽບຂອງ ທຄຕລ ຢ່າງຮັດກຸມ.
- ເອົາໃຈໃສ່ບໍລິຫານງານວຽກງານພາຍໃນຢ່າງຮັດກຸມ ແລະ ຄຸ້ມຄອງຄວາມສ່ຽງໃນແຕ່ລະດ້ານ.
- ຂະຫຍາຍຕາໜ່າງການບໍລິການພາຍໃນປະເທດໃຫ້ກວ້າງຂວາງ ໂດຍການຂະຫຍາຍໜ່ວຍບໍລິການໃນຈຸດທີ່ເຫັນວ່າເໝາະສົມ. ນອກຈາກນີ້, ຍັງຈະຮ່ວມທຸລະກິດກັບບັນດາທະນາຄານຕ່າງປະເທດ ແລະ ພືອພັນບັນດາທະນາຄານພາຍໃນ ແລະ ຕ່າງປະເທດ ເພື່ອຮ່ວມກັນບໍລິການລູກຄ້າໃຫ້ໄດ້ຕາມຄວາມຕ້ອງການ.
- ຈັດຕັ້ງຜັນຂະຫຍາຍ ຮູບແບບບໍລິການໃໝ່ ຕາມການຮັບຮອງຂອງສະພາບໍລິຫານ ແລະ ກອງປະຊຸມຜູ້ຖືຮຸ້ນ ໃຫ້ປະກົດຜົນເປັນຈິງ.
- ຄົ້ນຄວ້າປະກອບທຶນເພີ່ມ ໃຫ້ ທຄຕລ.
- ພັດທະນາລະບົບບໍລິການ ແລະ ລະບົບຂໍ້ມູນຂ່າວສານໃຫ້ໄດ້ມາດຕະຖານ.
- ສືບຕໍ່ພັດທະນາລະບົບການຊຳລະສະສາງ ທີ່ສາມາດເຊື່ອມໂຍງກັບຕະຫຼາດຫຼັກຊັບ ໃນການຊື້-ຂາຍ ຫຼັກຊັບ.
- ສືບຕໍ່ເຊື່ອມໂຍງລະບົບເຄືອຂ່າຍບໍລິການທາງເອເລັກໂທຣນິກ ກັບບັນດາທະນາຄານພາຍໃນ.
- ສືບຕໍ່ຄົ້ນຄວ້າຜະລິດຕະພັນໃໝ່ ໃຫ້ມີຄວາມຫຼາກຫຼາຍໃນການບໍລິການ ເປັນຕົ້ນແມ່ນຜະລິດຕະພັນເອເລັກໂທຣນິກ ແລະ ຜະລິດຕະພັນອື່ນໆ ຈຳນວນໜຶ່ງ ເພື່ອຕອບສະໜອງຄວາມຕ້ອງການຂອງສັງຄົມ.
- ສູ້ຊົນປະຕິບັດແຜນທຸລະກິດໃຫ້ສຳເລັດຕາມແຜນການທີ່ວາງໄວ້.

## 4. ກົງຈັກການຈັດຕັ້ງ.

4.1 ໂຄງຮ່າງການຈັດຕັ້ງ ທຄຕລ: ປະກອບດ້ວຍສະພາບໍລິຫານ ຈຳນວນ 7 ທ່ານ, ຄະນະອຳນວຍການ ຈຳນວນ 7 ທ່ານ, 10 ພະແນກ 3 ສູນ, 19 ສາຂາ, 77 ໜ່ວຍບໍລິການ ແລະ 15 ຫ້ອງແລກປ່ຽນເງິນຕາທົ່ວປະເທດ.

ໃນປີ 2015 ກອງປະຊຸມຜູ້ຖືຮຸ້ນ ໄດ້ຮັບຮອງເອົາສະພາບໍລິຫານ ທຄຕລ ຊຸດໃໝ່ ຕາມຂໍ້ຕົກລົງສະບັບເລກທີ 64/ກງ, ລົງວັນທີ 12 ມັງກອນ 2015 ແລະ ຂໍ້ຕົກລົງ ສະບັບເລກທີ 1960/ກງ, ລົງວັນທີ 18 ມິຖຸນາ ເພື່ອປ່ຽນແທນສະພາບໍລິຫານ ຊຸດຜ່ານມາທີ່ຄົບວາລະການດຳເນີນງານ. ສະພາບໍລິຫານຊຸດໃໝ່ ປະກອບດ້ວຍ:

1). ທ່ານ ດຣ ບຸນເຫຼືອ ສິນໄຊວໍລະວົງ ຫົວໜ້າກົມງົບປະມານແຫ່ງລັດກະຊວງການເງິນ ເປັນ ປະທານ

2). ທ່ານ ຄຳສຸກ ສູນດາລາ ບຸກຄົນເອກະລາດຈາກພາຍນອກ ເປັນ ຮອງປະທານ

3). ທ່ານ ພູຂົງ ຈັນທະຈັກ ຮັກສາການຜູ້ອຳນວຍການໃຫຍ່ ທຄຕລ ເປັນ ກຳມະການ

4). ທ່ານ ພັນຊະນະ ຄຸນນຸວົງ ຮອງຜູ້ອຳນວຍການໃຫຍ່ ທຄຕລ ເປັນ ກຳມະການ

5). ທ່ານ ນ. ຂັນທະລີ ວົງໄຊຍະລາດ ຮອງຜູ້ອຳນວຍການໃຫຍ່ ທຄຕລ ເປັນ ກຳມະການ

6). ທ່ານ ວຽງໄຊ ຈັນທະວິສຸກ ຫົວໜ້າພະແນກຄຸ້ມຄອງສາຂາ ຕາງໜ້າພະນັກງານ ເປັນ ກຳມະການ

7). Mr Marc ROBERT ຕາງໜ້າທະນາຄານ COFI BRED ໃນນາມຄູ່ຮ່ວມຍຸດທະສາດ ເປັນ ກຳມະການ

## ຄະນະສະພາບໍລິຫານ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ



**ທ່ານ ດຣ ບຸນເຫຼືອ ສິນໄຊວໍລະວົງ**
ປະທານສະພາບໍລິຫານ ທຄຕລ



**ທ່ານ ຄຳສຸກ ສູນດາລາ**
ຮອງ ປະທານສະພາບໍລິຫານ ທຄຕລ



**ທ່ານ ພູຂົງ ຈັນທະຈັກ**
ເປັນ ກຳມະການ



**ທ່ານ ພັນຊະນະ ຄຸນນຸວົງ**
ເປັນ ກຳມະການ



**ທ່ານ ນ. ຂັນທະລີ ວົງໄຊຍະລາດ**

ເປັນ ກຳມະການ



**ທ່ານ ວຽງໄຊ ຈັນທະວິສຸກ**

ເປັນ ກຳມະການ



Mr Marc ROBERT

ເປັນ ກຳມະການ

## ຄະນະອໍານວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ



**ທ່ານ ພູຂົງ ຈັນທະຈັກ**
ຜູ້ອໍານວຍການໃຫຍ່



**ທ່ານ ພັນຊະນະ ຄູນນຸວົງ**
ຮອງ ຜູ້ອໍານວຍການ



**ທ່ານ ລາໃຈ ຄັນພະວົງສ໌**
ຮອງ ຜູ້ອໍານວຍການ



**ທ່ານ ນັນທະລາດ ແກ້ວປະເສີດ**
ຮອງ ຜູ້ອໍານວຍການ



**ທ່ານ ນ. ຂັນທະລີ ວົງໄຊຍະລາດ**
ຮອງ ຜູ້ອໍານວຍການ



**ທ່ານ ຄໍຊ່ຽນ ມິ່ງບຸບຜາ**
ຮອງ ຜູ້ອໍານວຍການ



**ທ່ານ ສຸພັກ ຖິ່ນໄຊພອນ**
ຮອງ ຜູ້ອໍານວຍການ

**5. ການຈັດຕັ້ງປະຕິບັດພາລະກິດໃນ ປີ 2015.**

- ສຳເລັດການປັບປຸງໂຄງຮ່າງການຈັດຕັ້ງ ເພື່ອໃຫ້ສອດຄ່ອງກັບແຜນຍຸດທະສາດ ໂດຍການສ້າງຕັ້ງພະແນກ ຄຸ້ມຄອງຄວາມສ່ຽງ ແລະ ຕ້ານການຟອກເງິນ ແລະ ໄດ້ປັບປຸງ, ຊັບຊ້ອນພະນັກງານຈຳນວນໜຶ່ງໃນທົ່ວລະບົບ.
- ຕິດຕາມ, ກວດກາປະເມີນຜົນການຈັດຕັ້ງວຽກງານໃນແຕ່ລະໄລຍະ: ໂດຍການທົບທວນຜົນການດຳເນີນທຸລະກິດທົ່ວລະບົບເປັນແຕ່ລະໄຕມາດ, ຈັດກອງປະຊຸມສະພາບໍລິຫານທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສະໄໝວິສາມັນ 1 ຄັ້ງ, ສະໄໝສາມັນ 3 ຄັ້ງ, ສຳເລັດການຈັດກອງປະຊຸມຜູ້ຖືຮຸ້ນ 1 ຄັ້ງ ແລະ ຈ່າຍເງິນປັນຜົນໃຫ້ຂາຮຸ້ນ ທຄຕລ ປະຈຳ 06 ເດືອນຕົ້ນປີ 2015 ຈຳນວນ 173 ກີບ/ຮຸ້ນ.
- ສາມາດຂະຫຍາຍຕາໜ່າງການບໍລິການຂອງ ທຄຕລ ໄດ້ 9 ໜ່ວຍ ໃນທົ່ວປະເທດ. ນອກຈາກນີ້ ທຄຕລ ຍັງໄດ້ຮ່ວມມືກັບບັນດາທະນາຄານພາຍໃນ ແລະ ຕ່າງປະເທດ ເປັນຕົ້ນແມ່ນໄດ້ເຊັນ MOU ກັບທະນາຄານ CIMB ວຽກງານບໍລິການຂົນສົ່ງເງິນ ແລະ ວັດຖຸມີຄ່າ, ເຊັນ MOU ກັບທະນາຄານ ສະຫະກອນສິນເຊື່ອຂອງແຂວງຢູນນານ, ໄດ້ມີການຮ່ວມມືກັບ JCB ເປີດໂຕບັດ JCB visa debit ແລະ credit, ໄດ້ເປີດນຳໃຊ້ບໍລິການ BCOME ໂດຍການຮ່ວມມືກັບ ອົງການ UNCDF. ນອກຈາກນີ້ ກໍຍັງໄດ້ເປີດນຳໃຊ້ຜະລິດຕະພັນບັດເຄຣດິດຮ່ວມ BCEL Co-Brand Card ພາຍໃຕ້ການຮ່ວມມືກັບລັດວິສາຫະກິດການບິນລາວ ແລະ UnionPay International.
- ວຽກງານການຈັດຕັ້ງຮູບແບບບໍລິການໃໝ່: ສຳເລັດການລວມສູນຊັບສິນບັດ ມາຄຸ້ມຄອງຢູ່ສຳນັກງານໃຫຍ່.
- ເຊື່ອມໂຍງລະບົບຕູ້ ATM ລະຫວ່າງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ກັບທະນະຄານຮ່ວມໂຄງການຄື: ທະນາຄານ ST, Maruhan Japan Bank, ທະນາຄານກຸງສີອາຍຸດທະຍາ.
- ສຳເລັດການສ້າງ ແລະ ພັດທະນາຜະລິດຕະພັນຈຳນວນໜຶ່ງ ເປັນຕົ້ນແມ່ນ: ຜະລິດຕະພັນ I-Bank Version 3, ຜະລິດຕະພັນເງິນດ່ວນຊຸມຊົນ **(BCOME),** ຜະລິດຕະພັນ **BCEL-JCB Credit Card** ແລະ ຜະລິດຕະພັນ ໃໝ່ **BCEL Co-Brand Card.**
- ສຳເລັດການພັດທະນາຕູ້ຝາກເງິນ ສາມາດນຳໃຊ້ໄດ້ສະກຸນເງິນກີບ ຢູ່ສຳນັກງານໃຫຍ່. ໃນອານາຄົດຈະຂະຫຍາຍໄປ ບັນດາສາຂາທົ່ວປະເທດ.
- ສືບຕໍ່ຄົ້ນຄວ້າການຈັດຕັ້ງປະຕິບັດ ວິທີການປະກອບທຶນເພີ້ມ ໃຫ້ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
- ສ້າງລະບົບປ້ອງກັນຄວາມສ່ຽງໃນແຕ່ລະດ້ານ.

ນອກຈາກນີ້, ທຄຕລ ຍັງໄດ້ຮັບລາງວັນຈາກວາລະສານ Asian Banking & Finance ປະຈຳປີ 2015 ທີ່ປະເທດສິງກະໂປ ແລະ ລາງວັນ ICT AWARDS 2015 ຂອງອົງກອນ ASOCIO (Asian-Oceanian Com - puting Industry Organization) ຮ່ວມກັບ PKOM ສະມາຄົມ ICT ຂອງປະເທດມາເລເຊຍອີກດ້ວຍ.




ລາງວັນ ICT AWARDS 2015 ຂອງອົງກອນ ASOCIO ຮ່ວມກັບ PKOM
ສະມາຄົມ ICT ຂອງປະເທດມາເລເຊຍ




ລາງວັນ Asian Banking & Finance ປະຈຳປີ 2015 ທີ່ປະເທດສິງກະໂປ




ພິທີເປີດການນຳໃຊ້ຜະລິດຕະພັນ BCEL Co-Brand
(ທຄຕລ, ການບິນລາວ ແລະ Union Pay).




ພິທີເປີດການນຳໃຊ້ການເຊື່ອມໂຍງລະບົບ ATM (Bconnex) ລະຫວ່າງ
BCEL ແລະ ທະນາຄານ Maruhan  Japan Bank




ພິທີຖະແຫຼງຂ່າວເປີດນຳໃຊ້ຜະລິດຕະພັນ
ບັດ BCEL-JCB Credit Card




ພິທີເປີດການນຳໃຊ້ການເຊື່ອມໂຍງລະບົບ ATM (Bconnex) ລະຫວ່າງ
BCEL ແລະ ທະນາຄານກຸງສີອະຍຸດທະຍາ




ພິທີເປີດການນຳໃຊ້ຜະລິດຕະພັນ ທຄຕລ ບໍລິການເງິນດ່ວນຊຸມຊົນ
(BCOME)




ພິທີຖະແຫຼງຂ່າວເປີດນຳໃຊ້ການຊຳລະບັດນ້ຳມັນຜ່ານ ທຄຕລ

## 6. ການເຄື່ອນໄຫວຂອງສະພາບໍລິຫານ, ຄະນະອຳນວຍການ ແລະ ຄະນະກຳມະການອື່ນໆ

- **ສະພາບໍລິຫານ**

- ສຳເລັດການຈັດກອງປະຊຸມສະພາບໍລິຫານ ສະໄໝວິສາມັນ 1 ຄັ້ງ ແລະ ສະໄໝສາມັນ 3 ຄັ້ງ ເພື່ອຮັບຮອງ ເອົາຜົນການກວດສອບຖານະການເງິນຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ແລະ ບັນຫາຕ່າງໆທີ່ຈຳເປັນຮີບດ່ວນ.
- ໄດ້ປະຕິບັດຈ່າຍເງິນປັນຜົນໃຫ້ຂາຮຸ້ນ 06 ເດືອນ ທ້າຍປີ 2014 ຈຳນວນ 234 ກີບ/ຮຸ້ນ ແລະ ຈ່າຍເງິນປັນຜົນ 06 ເດືອນຕົ້ນປີ 2015 ຈຳນວນ 173 ກີບ/ຮຸ້ນ.

- ຮັບຮອງເອົາ ທ່ານ ນ. ຂັນທະລີ ວົງໄຊຍະລາດ ຮອງຜູ້ອຳນວຍການໃຫຍ່ ທຄຕລ ເປັນສະມາຊິກສະພາບໍລິຫານ ແລະ Mr Marc Robert ເປັນສະມາຊິກສະພາບໍລິຫານ ໃນນາມຕາງໜ້າຄູ່ຮ່ວມຍຸດທະສາດ.
- ຮັບຮອງການປັບປຸງ 3 ຄະນະກຳມະການທີ່ຂຶ້ນກັບສະພາບໍລິຫານ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.
- ຮັບຮອງສ້າງຕັ້ງພະແນກຄຸ້ມຄອງຄວາມສ່ຽງ ແລະ ຕ້ານການຟອກເງິນ.
- ຮັບຮອງບໍລິສັດກວດສອບເອີນແອນຢັງລາວ ຈຳກັດ ເປັນຜູ້ກວດສອບຖານະການເງິນ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ປະຈຳປີ 2016.

➢ **ຄະນະກຳມະການຄຸ້ມຄອງບໍລິຫານ**

ສຳເລັດການຈັດກອງປະຊຸມຄະນະບໍລິຫານງານ ແລະ ວາງແຜນຍຸດທະສາດ ຈຳນວນ 6 ຄັ້ງ ເພື່ອປະເມີນທົບທວນຜົນການຈັດຕັ້ງປະຕິບັດວຽກງານ ແລະ ຄົ້ນຄວ້າປຶກສາຫາລືໃນການບໍລິຫານວຽກງານຕາມແຜນການທີ່ວາງໄວ້ດັ່ງນີ້: ຄະນະກຳມະການບໍລິຫານງານ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໄດ້ດຳເນີນກອງປະຊຸມປະເມີນທົບທວນຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມຕ່າງໆເປັນປະຈຳໃນແຕ່ລະເດືອນ ເຊັ່ນ:

- ສຳເລັດການຈັດກອງປະຊຸມທົບທວນຜົນການດຳເນີນທຸລະກິດປະຈຳປີ 2014 ແລະ ປະຈຳໄຕມາດ 01, 02 ແລະ 03 ປີ 2015.
- ສາມາດຂະຫຍາຍໜ່ວຍບໍລິການໃນຂອບເຂດທົ່ວປະເທດ ຈຳນວນ 9 ໜ່ວຍບໍລິການ.
- ໄດ້ປັບປຸງພາລະບົດບາດຂອງພະແນກຈຳນວນໜຶ່ງເຊັ່ນ: ພະແນກຄົ້ນຄວ້າ, ພັດທະນາ ແລະ ການຕະຫຼາດ, ພະແນກບໍລິການລູກຄ້າລາຍໃຫຍ່, ພະແນກກວດກາພາຍໃນ, ພະແນກຄຸ້ມຄອງສາຂາ ແລະ ພະແນກຄັງສາງ ໃຫ້ແທດ ເໝາະຍິ່ງຂຶ້ນ.
- ສຳເລັດການປະຕິບັດໂຄງການ Bconnex ລະຫວ່າງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ກັບ ທະນາຄານ ST, ທະນາຄານ Maruhan Japan Bank ແລະ ທະນາຄານກຸງສີອະຍຸດທະຍາ.
- ໄດ້ຄົ້ນຄວ້າເພີ່ມທຶນໃຫ້ແກ່ທະນາຄານຮ່ວມທຸລະກິດລາວ-ຫວຽດນາມ, ເຊິ່ງຄູ່ຮ່ວມທຶນ (BIDV) ໄດ້ປະກອບທຶນເພີ່ມ, ສ່ວນ ທຄຕລ ແມ່ນໄດ້ຂາຍຮຸ້ນຂອງຕົນອອກ 10% ໃຫ້ແກ່ຂາຮຸ້ນທີ 3 ແທນການປະກອບທຶນເປັນເມັດເງິນ.
- ເປີດໂຕຜະລິດຕະພັນ BCEL- JCB Credit Card ໂດຍການຮ່ວມມື ລະຫວ່າງ ທຄຕລ ກັບບໍລິສັດ JCB ປະເທດຍີ່ປຸ່ນ, ເປີດໂຕຜະລິດຕະພັນເງິນດ່ວນຊຸມຊົນ (BCOME) ແລະ ຜະລິດຕະພັນໃໝ່ BCEL Co-Brand Card (ເປັນການຮ່ວມມືກັນລະຫວ່າງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ທຄຕລ, ການບິນລາວ ແລະ Union Pay).
- ສຳເລັດການຄົ້ນຄວ້າປັບປຸງຄ່າອັດຕາດອກເບ້ຍ ແລະ ທຳນຽມໃຫ້ເໝາະສົມ ເພື່ອສ້າງລາຍຮັບ ທຄຕລ ເພີ້ມຂຶ້ນ.
- ສຳເລັດການປັບປຸງລະບຽບ ແລະ ນະໂຍບາຍ ທຄຕລ ຄືນຈຳນວນນຶ່ງເພື່ອໃຫ້ສອດຄ່ອງເໝາະສົມຂຶ້ນກວ່າເກົ່າ.
- ສຳເລັດຄົ້ນຄວ້າການສ້າງຕັ້ງພະແນກໃໝ່: ພະແນກຄຸ້ມຄອງຄວາມສ່ຽງ ແລະ ຕ້ານການຟອກເງິນ.

- ຄົ້ນຄວ້າການສ້າງລາຍຮັບເພີ້ມໃຫ້ແກ່ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ດ້ວຍວິທີການລົງທຶນຕ່າງໆ.
- ໄດ້ເອົາໃຈໃສ່ຕິດຕາມ ແລະ ຄົ້ນຄວ້າໃນການແກ້ໄຂ NPL ລູກຄ້າລາຍໃຫຍ່.
- ໄດ້ຄົ້ນຄວ້າຜະລິດຕະພັນສິນເຊື່ອໃໝ່ໃຫ້ແທດເໝາະກັບຄວາມຕ້ອງການຂອງລູກຄ້າບຸກຄົນ ແລະ SME, ໂດຍໄດ້ແຕ່ງຕັ້ງຄະນະກຳມະການຄົ້ນຄວ້າສະເພາະ ແລະ ຄາດວ່າ ຈະອອກຜະລິດຕະພັນເງິນກູ້ໃໝ່ໃນໄວໆນີ້.
- ໄດ້ຄົ້ນຄວ້າຂຶ້ນແຜນການກໍ່ສ້າງບຸກຄະລາກອນ ແລະ ແຜນຮັບພະນັກງານໃໝ່ ໃນປີ 2016.
- ຄົ້ນຄວ້າການປັບປຸງຄຸນນະພາບການບໍລິການ, ຂະຫຍາຍຕາໜ່າງບໍລິການ ແລະ ວາງກົນລະຍຸດໃນການດຶງດູດລູກຄ້າມາໃຊ້ບໍລິການ.
- ໄດ້ປັບປຸງການຈັດຕັ້ງຂັ້ນພະແນກຢູ່ສຳນັກງານໃຫຍ່ ແລະ ສາຂາ.

➢ **ຄະນະກຳມະການບໍລິຫານຄວາມສ່ຽງ**

ສຳເລັດການຈັດກອງປະຊຸມຄະນະກຳມະການຄວາມສ່ຽງ ຈຳນວນ 3 ຄັ້ງ, ເພື່ອປຶກສາຫາລືຄົ້ນຄວ້າການປ້ອງກັນຄວາມສ່ຽງໃນດ້ານຕ່າງໆ ຂອງ ທຄຕລ, ຕິດຕາມການກວດກາພາຍໃນຂອງ ທຄຕລ, ຕິດຕາມການແກ້ໄຂຂໍ້ພົບເຫັນໃນດ້ານຕ່າງໆ ແລະ ບັນຫາອື່ນໆດັ່ງນີ້: ຄະນະກຳມະການຄວາມສ່ຽງ ໄດ້ເອົາໃຈໃສ່ໃນການຕິດຕາມ ແລະ ປະເມີນຄວາມສ່ຽງຂອງທະນາຄານຕ່າງໆເຊັ່ນ:

- ເອົາໃຈໃສ່ວຽກງານການກວດກາສຸກເສີນຫຼາຍຂຶ້ນ, ຕິດຕາມການເກັບຂໍ້ມູນກ້ອງວົງຈອນປິດ ໃຫ້ມີການບັນທຶກຕໍ່ເນື່ອງ.
- ໄດ້ເອົາໃຈໃສ່ຕິດຕາມ ວິເຄາະຄວາມສ່ຽງສິນເຊື່ອ, ໂດຍສະເພາະຄວາມສ່ຽງລູກຄ້າລາຍໃຫຍ່ ແລະ ຕິດຕາມນະໂຍບາຍ ແລະ ຂັ້ນຕອນໃນປະຕິບັດການຄຸ້ມຄອງເງິນກູ້ ແລະ ຕິດຕາມເກັບໜີ້ NPL.
- ໄດ້ຕິດຕາມຄວາມສ່ຽງໃນການບໍລິຫານທຶນ, ຄວາມສ່ຽງການຊື້ຂາຍເງິນຕາ, ບັນຫາສະພາບຄ່ອງແຕ່ລະໄລຍະ.
- ຕິດຕາມປ້ອງກັນຄວາມສ່ຽງດ້ານ IT.
- ໄດ້ຄົ້ນຄວ້າການຕິດຕັ້ງລະບົບ Alarm ເຕືອນໄພໃສ່ຕູ້ ATM.
- ຕິດຕາມຄວາມສ່ຽງດ້ານບໍລິການ ແລະ ບັນຫາເງິນສົດ.
- ເອົາໃຈໃສ່ການບໍລິການຕ່າງໆທີ່ຕິດພັນກັບການຕ້ານການຟອກເງິນຢູ່ລະບົບຂອງ ທຄຕລ.

➢ **ຄະນະກຳມະການກວດກາ.**

- ສຳເລັດການຈັດກອງປະຊຸມຄະນະກຳມະການກວດກາ 6 ຄັ້ງ, ເພື່ອປຶກສາຫາລືວຽກງານກວດກາພາຍໃນຂອງ ທຄຕລ ແລະການກວດສອບຈາກບໍລິສັດກວດສອບພາຍນອກໃນໄລຍະຜ່ານມາ. ນອກຈາກນີ້, ຍັງໄດ້ຄົ້ນຄວ້າພັດທະນາວຽກງານການກວດກາພາຍໃນຮູບແບບໃໝ່ (IA) ແລະ ໂຄງການນຳໃຊ້ບັນຊີມາດຖານລາຍງານສາກົນ IFRS ຈາກບໍລິສັດ E&Yດັ່ງນີ້: ສຳເລັດການກວດສອບຖານະການເງິນ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ປີ **2014** ຈາກບໍລິສັດກວດສອບພາຍນອກ (ບໍລິສັດ **E&Y).**
- ສຳເລັດການລົງກວດກາຕົວຈິງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ປະຈຳປີ **2014** ຈາກກົມຄຸ້ມຄອງທະນາຄານທຸລະກິດ ທະນາຄານແຫ່ງ ສປປ ລາວ (ທຫລ**).**

- ສຳເລັດການຄັດເລືອກບໍລິສັດກວດສອບພາຍນອກ ປະຈຳປີ **2015** ພ້ອມທັງສຳເລັດການເຊັນສັນຍາການກວດສອບປະຈຳປີ **2015** ກັບບໍລິສັດກວດສອບດັ່ງກ່າວ (ບໍລິສັດເອີ້ນແອນຢັງລາວ ຈຳກັດ **(E&Y)**.
- ໄດ້ຄົ້ນຄວ້າຄັດເລືອກບໍລິສັດກວດສອບພາຍນອກ ປະຈຳປີ 2016, ພ້ອມທັງໄດ້ທົບທວນການຈັດຕັ້ງປະຕິບັດວຽກງານກວດກາໄລຍະຜ່ານມາກັບບໍລິສັດກວດສອບພາຍນອກ E&Y ເພື່ອຖອດຖອນບົດຮຽນ ແລະ ປຶກສາວິທີແກ້ໄຂໃນໃນການກວດກາປີ 2016 ໃຫ້ມີຄວາມຖືກຕ້ອງ, ວ່ອງໄວຂຶ້ນ.
- ສຳເລັດການດຳເນີນໂຄງການພັດທະນາວຽກງານກວດກາພາຍໃນ (IA) ຈາກບໍລິສັດ E&Y. ປະຈຸບັນ, ພະແນກກວດກາພາຍໃນກຳລັງຈັດສຳມະນາວຽກງານກວດກາດັ່ງກ່າວໃຫ້ພະນັກງານພາຍໃນພະແນກຂອງຕົນ.
- ດຳເນີນການກວດກາຕາມແຜນປີ, ກວດກາສຸກເສີນ ແລະ ກວດກາຕາມທິດຊີ້ນຳ ບັນດາພະແນກ, ສູນ ແລະ ສາຂາ ທຄຕລ ທົ່ວລະບົບ ແລະ ມີການລາຍງານຜົນການກວດກາຢ່າງເປັນປົກກະຕິ.
- ສຳເລັດການກວດສອບຖານະການເງິນ 9 ເດືອນ 2015 ຂອງ ທຄຕລ ໂດຍຄະນະກວດສອບພາຍໃນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.
- ໄດ້ເລີ້ມນຳໃຊ້ລະບົບການກວດກາແບບໃໝ່ຕາມລະບົບທີ່ບໍລິສັດ E&Y .
- ສຳເລັດການສ້າງຄູ່ມືການນຳໃຊ້ລະບົບລາຍງານຕາມມາດຖານສາກົນ IFRS.
- ເອົາໃຈໃສ່ຕິດຕາມ ແລະ ເນັ້ນໜັກໃຫ້ພະນັກງານປະຕິບັດຫຼັກການກວດກາ 3 ຂັ້ນຕອນ, ພ້ອມທັງໄດ້ເອົາໃຈໃສ່ຕິດຕາມການແກ້ໄຂຂໍ້ພົບເຫັນຕ່າງໆຂອງກວດສອບພາຍນອກ ແລະ ຂໍ້ພົບເຫັນຂອງພະແນກກວດກາ.
- ໄດ້ເອົາໃຈໃສ່ຕິດຕາມລະບົບ IT ທີ່ຄິດໄລ່ດອກເບ້ຍໃນທ້າຍໄຕມາດບໍ່ໃຫ້ມີບັນຫາ.

➢ **ການເຄື່ອນໄຫວຄະນະກຳມະການຍ່ອຍໂດຍສັງເຂບ**

ນອກຈາກຄະນະກຳມະການຂ້າງເທິງແລ້ວ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຍັງມີຄະນະກຳມະການຍ່ອຍໆຈຳນວນນຶ່ງເຊັ່ນ: ຄະນະກຳມະການກໍ່ສ້າງ ແລະ ສ້ອມແປງ, ຄະນະກຳມະການພັດທະນາໄອທີ, ຄະນະກຳມະການບໍລິຫານໜີ້ສິນ ແລະ ຊັບສິນ, ຄະນະກຳມະການຈັດຊື້ ແລະ ຄະນະກຳມະການອື່ນໆ. ຊຶ່ງຄະນະກຳມະການດັ່ງກ່າວຈະຈັດປະຊຸມຂຶ້ນເປັນປະຈຳທຸກໆເດືອນ ຫຼື ຈັດຂຶ້ນຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານເພື່ອຄົ້ນຄວ້າປຶກສາຫາລືວຽກງານຕ່າງໆທີ່ຈຳເປັນເພື່ອອຳນວຍຄວາມສະດວກຮັບປະກັນໃຫ້ແກ່ວຽກງານການບໍລິການລູກຄ້າ ຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ທົ່ວລະບົບ ໄດ້ຢ່າງທ່ວງທັນກັບສະພາບ.

## 7. ການເຄື່ອນໄຫວການດຳເນີນທຸລະກິດຂອງ ທຄຕລ ໃນ ປີ 2015.

ຜ່ານການດຳເນີນທຸລະກິດໃນ 1 ປີ ຜ່ານມາ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສາມາດຈັດຕັ້ງປະຕິບັດດ້ານແຜນທຸລະກິດໄດ້ດີພໍສົມຄວນ,ແຕ່ຄຽງຄູ່ກັບຂໍ້ຫຍຸ້ງຍາກໃນຫຼາຍດ້ານເຮັດໃຫ້ພວກເຮົາບໍ່ສາມາດບັນລຸແຜນການປີໄດ້ຫຼາຍດ້ານໃນທົ່ວລະບົບ ດັ່ງນີ້:

❖ **<u>ຍອດຊັບສິນ:</u>**

ໃນປີ 2015 ລວມທັງໝົດມີ 25,776 ຕື້ກີບ ປະຕິບັດໄດ້ລື່ນແຜນການປີ 5.7% ທຽບໃສ່ປີ 2014 ທີ່ຜ່ານມາເພີ້ມຂຶ້ນ 9.7%.

❖ **<u>ການລະດົມທຶນ.</u>**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສືບຕໍ່ນຳໃຊ້ຍຸດທະສາດການລະດົມທຶນ ໂດຍການບໍລິການລູກຄ້າເງິນຝາກຕາມວັດທະນາທຳຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນຜ່ານມາ, ແຕ່ ທຄຕລ ກໍ່ໄດ້ເອົາໃຈໃສ່ປັບປຸງຮູບແບບການບໍລິການ ເພື່ອສົ່ງເສີມການຝາກເງິນຂອງລູກຄ້າດ້ວຍວິທີການຕ່າງໆ. ນອກຈາກນີ້, ຍັງໄດ້ປັບປຸງອັດຕາດອກເບ້ຍເງິນຝາກໃຫ້ເໝາະສົມໃນແຕ່ໄລຍະ ເຮັດໃຫ້ເງິນຝາກ ຂອງ ນັບມື້ນັບສູງຂຶ້ນ. ໃນນັ້ນ, ເງິນຝາກຂອງ ທຄຕລ ສາມາດປະຕິບັດໄດ້ເກີນແຜນການປີ 5% ແລະ ເພີ່ມຂຶ້ນຈາກປີຜ່ານມາ 8%.

❖ <u>ການຂະຫຍາຍ ແລະ ຄຸ້ມຄອງສິນເຊື່ອ.</u>

ໃນປີ 2015 ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສາມາດຂະຫຍາຍສິນເຊື່ອ ໄດ້ຈຳນວນ 11,026 ຕື້ກີບ, ແກ້ໄຂໜີ້ NPL ໃນຜັງ ແລະ ນອກຜັງໄດ້ຈຳນວນຫຼາຍ.

❖ <u>ກຳໄລ/ຂາດທຶນ.</u>

ປີ 2015 ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ມີກຳໄລກ່ອນອາກອນ 147 ຕື້ກີບ ທຽບໃສ່ແຜນການປີ ສາມາດປະຕິບັດໄດ້ 94.4% ທຽບໃສ່ປີຜ່ານມາ ສາມາດປະຕິບັດໄດ້ 94.1%.

ຜູ້ອຳນວຍການ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ພູຊົງ ຈັນທະຈັກ

ໝາຍເຫດ: ສຳລັບຕົວເລກຜົນການດຳເນີນທຸລະກິດແມ່ນອີງຕາມເອກະສານລາຍງານການເງິນລວມກິດຈະການ ມາດຖານສາກົນ